ສຳນັກງານ ຄຄຊ
ຮັບ ເລກທີ..0089........
ວັນທີ 23 JAN 2018
ໂທລະສັບ 021 217770

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ
ຫ້ອງການ

ເລກທີ: 05 /ຫກ
ນະຄອນຫຼວງວຽງຈັນ, ວັນທີ: 23 ມັງກອນ 2018

# ບົດລາຍງານ

## ການເຄື່ອນໄຫວຂອງທະນາຄານແຫ່ງສປປລາວ
## ປະຈຳອາທິດທີ 08-12/01/2018 ແລະ ແຜນການເຄື່ອນໄຫວໃນອາທິດຕໍ່ໄປ

### I. ວຽກງານການເມືອງແນວຄິດ

ສະພາບການເມືອງແນວຄິດຂອງພະນັກງານພາຍໃນຂະແໜງທະນາຄານມີຄວາມສະຫງົບປົກກະຕິ, ພະນັກງານມີຄວາມອຸ່ນອ່ຽນທຸ່ນທ່ຽງ, ເຊື່ອໝັ້ນຕໍ່ການນຳພາຂອງພັກ-ລັດ, ມີສະຕິເຄົາລົບຕໍ່ການຈັດຕັ້ງ, ລະບຽບກົດໝາຍ ແລະ ຕັ້ງໜ້າປະຕິບັດໜ້າທີ່ວຽກງານຕາມທີ່ໄດ້ຮັບມອບໝາຍຢ່າງຕັ້ງໜ້າ, ມີຄວາມສາມັກຄີທັງພາຍໃນ ແລະ ພາຍນອກເປັນຢ່າງດີ.

### II. ການເຄື່ອນໄຫວວຽກງານວິຊາສະເພາະ

### 1. ສະພາບເສດຖະກິດເງິນຕາສາກົນ

#### 1.1 ອັດຕາແລກປ່ຽນສາກົນ

ອັດຕາແລກປ່ຽນຢູ່ຕະຫຼາດສາກົນອາທິດນີ້ທຽບໃສ່ອາທິດຜ່ານມາເຫັນວ່າ: ເງິນໂດລາສະຫະລັດອ່ອນຄ່າລົງ 0,65% ທຽບເອີໂຣ ເນື່ອງຈາກຕົວເລກທາງດ້ານເສດຖະກິດຂອງ ສ. ອາເມລິກາ ອອກມາບໍ່ດີ ເປັນຕົ້ນແມ່ນຈຳນວນປະຊາຊົນທີ່ຂໍສະຫວັດດີການວ່າງງານຄັ້ງທຳອິດເພີ່ມຂຶ້ນມາເປັນ 261.000 ຄົນ ຂອງອາທິດທີ 06/01/2018 ຈາກ 250.000 ຄົນ ໃນອາທິດຜ່ານມາ ແລະ ຕົວເລກຍອດຂາຍສິນຄ້າຂາຍຍ່ອຍຂອງເດືອນ 12/2017 ເພີ່ມຂຶ້ນພຽງແຕ່ 0,4% ຈາກເພີ່ມຂຶ້ນ 0,9% ໃນເດືອນຜ່ານມາ.

| ສະກຸນເງິນຕ່າງໆທຽບກັບໂດລາ | ອາທິດຜ່ານມາ 01-05/01/2018 | ອາທິດນີ້ 08-12/01/2018 | ເປີເຊັນ ແຂງຄ່າ(+) / ອ່ອນຄ່າ(–) |
|---|---|---|---|
| ໂດລາ/ເອີໂຣ | 1,2044 | 1,2123 | -0,65% |
| ເຢນ/ໂດລາ | 113,22 | 111,10 | 1,91% |
| ບາດ/ໂດລາ | 32,22 | 31,96 | 0,81% |
| ເປໂຊ/ໂດລາ | 49,90 | 50,36 | -0,91% |
| ຣູເປັຍ/ໂດລາ | 13.413,00 | 13.350,00 | 0,47% |
| ໂດລາສິງກະໂປ/ໂດລາ | 1,3279 | 1,3274 | 0,04% |
| ຢວນ/ໂດລາ | 6,4870 | 6,4550 | 0,50% |

#### 1.2 ສະພາບລາຄານ້ຳມັນ ແລະຄຳໃນຕະຫຼາດໂລກ

- ລາຄານ້ຳມັນເພີ່ມຂຶ້ນ 3,55% ຈາກ 61,33 ໂດລາ/ບາເຣວ ມາເປັນ 63,51 ໂດລາ/ບາເຣວ ເນື່ອງຈາກຄັງສຳຮອງນ້ຳມັນດິບຂອງ ສ.ອາເມລິກາ ສືບຕໍ່ຫຼຸດລົງຈາກ 7,42 ລ້ານບາເຣວ ໃນອາທິດຜ່ານມາ[1] ມາເປັນ 4,95 ລ້ານບາເຣວ ຂອງອາທິດທີ 05/01/2018.

[1] ແຫຼ່ງທີ່ມາຂອງຂໍ້ມູນ https://www.dailyfx.com/calendar

- ສຳລັບລາຄາຄຳເພີ່ມຂຶ້ນ 1,08% ຈາກ 1.316,72 ໂດລາ/ອອນ ມາເປັນ 1.310,89 ໂດລາ/ອອນ ເນື່ອງຈາກການອ່ອນຄ່າລົງຂອງເງິນໂດລາສະຫະລັດ ເຮັດໃຫ້ນັກລົງທຶນຫຼຸດຜ່ອນການຖືຄອງເງິນໂດລາລົງ, ແລ້ວຫັນເຂົ້າມາຊື້ຄຳ ແລະ ສັນຍາຊື້-ຂາຍຄຳເພີ່ມຂຶ້ນ.

## 2.ສະພາບເສດຖະກິດເງິນຕາພາຍໃນ

### 2.1 ສະພາບອັດຕາແລກປ່ຽນພາຍໃນ

ສະພາບອັດຕາແລກປ່ຽນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າເງິນກີບທຽບໃສ່ເງິນໂດລາອ່ອນຄ່າລົງ 0,05% ແລະ ອ່ອນຄ່າລົງ 0,88% ເມື່ອທຽບໃສ່ສະກຸນເງິນບາດ. ທຽບໃສ່ທ້າຍປີຜ່ານມາເຫັນວ່າເງິນກີບແຂງຄ່າຂຶ້ນ 0,13% ທຽບໃສ່ສະກຸນເງິນໂດລາ ແຕ່ອ່ອນຄ່າລົງ 1,78% ທຽບໃສ່ສະກຸນເງິນບາດ.

| ອັດຕາ | ອາທິດຜ່ານມາ 05/01/2018 | | | ອາທິດນີ້ 12/01/2018 | | | %ທຽບອາທິດຜ່ານມາ | | | ທຽບທ້າຍປີຜ່ານມາ | | |
|---|---|---|---|---|---|---|---|---|---|---|---|---|
| | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ |
| ອັດຕາທະຄານ[2] | | | | | | | | | | | | |
| ໂດລາ | 8.289.09 | 8.312,60 | 8.297.31 | 8.292.88 | 8.314.76 | 8.301.68 | -0.05% | -0.03% | -0.05% | 0.10% | 0.15% | 0.13% |
| ບາດ | 257.45 | 259.30 | 258.49 | 259.92 | 261.61 | 260.78 | -0.95% | -0.88% | -0.88% | -1.88% | -1.85% | -1.78% |

### 2.2 ສະພາບຖານເງິນຕາແລະປະລິມານເງິນ M2

- ຖານເງິນຕາປະຈຳອາທິດນີ້ຫຼຸດລົງ 2,45% ເມື່ອທຽບໃສ່ອາທິດຜ່ານມາ, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາເພີ່ມຂຶ້ນ 15,32%;
- ປະລິມານເງິນ M2 ເພີ່ມຂຶ້ນ 0,52% ເມື່ອທຽບໃສ່ອາທິດຜ່ານມາ, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາເພີ່ມຂຶ້ນ 11,62%.

### 2.3 ການຊື້-ຂາຍເງິນຕາ (ເງິນໂດລາ ແລະ ເງິນບາດ) ຂອງທົ່ວລະບົບທະນາຄານທຸລະກິດ

- ການຊື້-ຂາຍເງິນຕາຕ່າງປະເທດ (ເງິນໂດລາ ແລະ ເງິນບາດ) ຂອງບັນດາທະນາຄານທຸລະກິດກັບລູກຄ້າພາຍໃນປະຈຳອາທິດ (05/01/2018-11/01/2018) ເຫັນວ່າ ທທກ ຊື້ໂດລາສຸດທິ 19,07 ລ້ານໂດລາ (ໃນນີ້ຊື້ໂດລາໄດ້ 41,50 ລ້ານໂດລາ ແລະ ຂາຍໂດລາໄດ້ 22,43 ລ້ານໂດລາ) ແຕ່ຂາຍເງິນບາດສຸດທິ 417,15 ລ້ານບາດ (ໃນນີ້ຊື້ບາດໄດ້ 186,58 ລ້ານບາດ ແລະ ຂາຍບາດໄດ້ 603,73 ລ້ານບາດ); ມູນຄ່າການຊື້-ຂາຍເງິນໂດລາ ແລະ ເງິນບາດເມື່ອທຽບໃສ່ອາທິດຜ່ານມາເຫັນວ່າເງິນໂດລາເພີ່ມຂຶ້ນ 31,41% ແລະ ເງິນບາດເພີ່ມຂຶ້ນ 136,26%.
- ການຊື້-ຂາຍລະຫວ່າງ ທຫລ ກັບ ທທກ ເຫັນວ່າ: ທຫລ ຊື້ເງິນໂດລາຈາກທະນາຄານທຸລະກິດຈຳນວນ 5 ລ້ານໂດລາ ແຕ່ເງິນບາດ ບໍ່ມີການຊື້-ຂາຍ;
- ການຊື້-ຂາຍລະຫວ່າງທະນາຄານທຸລະກິດດ້ວຍກັນເຫັນວ່າ: ມີປະລິມານຊື້-ຂາຍເງິນໂດລາ ຈຳນວນ 6,60 ລ້ານໂດລາສະຫະລັດ ແລະ ເງິນບາດ ຈຳນວນ 52,89 ລ້ານບາດ;
- ການຊື້-ຂາຍລະຫວ່າງ ທຫລ ກັບພາກສ່ວນອື່ນໆ ໃນອາທິດນີ້ເຫັນວ່າບໍ່ມີການຊື້-ຂາຍ.

1% ການປ່ຽນແປງຂອງອັດຕາແລກປ່ຽນທະນາຄານທຸລະກິດ ແມ່ນໄດ້ຈາກອັດຕາສະເລ່ຍຖ່ວງນ້ຳໜັກ

ສະພາບການຊື້-ຂາຍເງິນຕາຕ່າງປະເທດ (ຫົວໜ່ວຍ: ລ້ານ)

| | ອາທິດທີ່ຜ່ານມາ 29/12/2017-04/01/2018 | | ອາທິດນີ້ 05/01/2018-11/01/2018 | | (%) +ເພີ່ມຂຶ້ນ/-ຫຼຸດລົງ | |
|---|---|---|---|---|---|---|
| | ໂດລາ | ບາດ | ໂດລາ | ບາດ | ໂດລາ | ບາດ |
| 1. ການຊື້ເງິນຕາຕ່າງປະເທດ | 30,16 | 98,02 | 41,50 | 186,58 | 37,60% | 90,35% |
| - ທ/ຄທຸລະກິດລັດ | 5,98 | 55,89 | 14,79 | 76,59 | 147,32% | 37,04% |
| - ທ/ຄທຸລະກິດອື່ນໆ | 24,18 | 42,13 | 26,71 | 109,99 | 10,46% | 161,07% |
| 2. ການຂາຍເງິນຕາຕ່າງປະເທດ | 18,49 | 236,49 | 22,43 | 603,73 | 21,31% | 155,29% |
| - ທ/ຄທຸລະກິດລັດ | 7,03 | 84,30 | 11,60 | 78,67 | 65,01% | -6,68% |
| - ທ/ຄທຸລະກິດອື່ນໆ | 11,46 | 152,19 | 10,83 | 525,06 | -5,50% | 245,00% |
| ຊື້-ຂາຍສຸດທິທທກ | 11,67 | -138,47 | 19,07 | -417,15 | 63,41% | 201,26% |
| - ຜິດດ່ຽງຊື້-ຂາຍ | 38,69% | -141,27% | 45,95% | -223,58% | 18,76% | 58,26% |
| - ມູນຄ່າການຊື້-ຂາຍ | 48,65 | 334,51 | 63,93 | 790,31 | 31,41% | 136,26% |
| 3.ການຊື້-ຂາຍລະຫວ່າງ ທຫລ ກັບ ທທກ | 10,00 | 0,00 | 5,00 | 0,00 | | |
| - ທຫລຊື້ຈາກທທກ | 10,00 | 0,00 | 5,00 | 0,00 | | |
| - ທຫລຂາຍໃຫ້ທທກ | 0,00 | 0,00 | 0,00 | 0,00 | | |
| 4.ຊື້-ຂາຍລະຫວ່າງທທກດ້ວຍກັນ | 4,95 | 37,83 | 6,60 | 52,89 | | |
| 5.ທຫລກັບ ພາກສ່ວນອື່ນໆ | 0,00 | 0,00 | 0,00 | 0,00 | | |
| -ທຫລຊື້ຈາກພາກສ່ວນອື່ນໆ | 0,00 | 0,00 | 0,00 | 0,00 | | |
| -ທຫລຂາຍໃຫ້ພາກສ່ວນອື່ນໆ | 0,00 | 0,00 | 0,00 | 0,00 | | |

### 2.4 ສະພາບອັດຕາເງິນເຟີ້

ອັດຕາເງິນເຟີ້ໃນເດືອນ 01/2018 ຄາດວ່າຈະຢູ່ໃນລະດັບ 0,41% (ຕົວເລກຄາດຄະເນ).

### 2.5 ການຄຸ້ມຄອງເງິນຕາຕ່າງປະເທດ ແລະການສົ່ງເສີມນຳໃຊ້ເງິນກີບ

ທະນາຄານແຫ່ງ ສປປ ລາວ ໄດ້ອະນຸຍາດໃຫ້ທະນາຄານທຸລະກິດນຳເຂົ້າເງິນຕາຕ່າງປະເທດໃນອາທິດນີ້ຫຼຸດລົງ 42,9% ທຽບໃສ່ອາທິດຜ່ານມາ ໂດຍມີຈຳນວນ 25,07 ລ້ານໂດລາສະຫະລັດທຽບເທົ່າ. ໃນນັ້ນ ໄດ້ອະນຸຍາດໃຫ້ທະນາຄານທຸລະກິດນຳເງິນຕາຕ່າງປະເທດອອກນອກ ສປປ ລາວ ເພີ່ມຂຶ້ນ 64,6% ທຽບໃສ່ອາທິດຜ່ານມາ ໂດຍມີຈຳນວນ 53,06 ລ້ານໂດລາສະຫະລັດທຽບເທົ່າ.

## 3. ສະພາບການເຄື່ອນໄຫວຊຳລະສະສາງຜ່ານທະນາຄານແຫ່ງສປປລາວ

ແຊັກເຄື່ອນໄຫວຜ່ານສູນຊຳລະສະສາງຂອງ ທຫລ ໃນອາທິດນີ້ຈຳນວນ 570 ສະບັບ ທຽບໃສ່ອາທິດຜ່ານມາ ເພີ່ມຂຶ້ນ 151 ສະບັບ ເທົ່າກັບ 36,03% ລວມຈຳນວນເງິນທີ່ໂອນຜ່ານທັງໝົດ 233,77 ຕື້ກີບ ທຽບໃສ່ອາທິດຜ່ານມາຫຼຸດລົງ 94,29 ຕື້ກີບ ເທົ່າກັບ 67,60% ເມື່ອທຽບໃສ່ອາທິດຜ່ານມາ;

ການໂອນເງິນຜ່ານລະບົບຊຳລະສະສາງແບບມູນຄ່າສູງ (RTGS) ລະຫວ່າງວັນທີ (05-11/01/2018) ມີທັງໝົດ 3.378 ຄັ້ງ. ເຊິ່ງເປັນສະກຸນເງິນກີບ ລວມມູນຄ່າການໂອນທັງໝົດໃນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າ ຫຼຸດລົງ ຈຳນວນ 453,60 ຕື້ກີບ ຈາກ 1.403,38 ຕື້ກີບ ມາເປັນ 949,77 ຕື້ກີບ ເທົ່າກັບ 209,38%. ສຳລັບກະຊວງການເງິນແມ່ນບໍ່ມີການເຄື່ອນໄຫວ.

4. ສະພາບການຊື້-ຂາຍຫຼັກຊັບໃນຕະຫຼາດຫຼັກຊັບລາວ.

ດັດຊະນີຕະຫຼາດຫຼັກຊັບລາວໃນອາທິດນີ້ປິດຢູ່ທີ່ 974,98 ຈຸດ ຫຼຸດລົງ 1,58% ເມື່ອທຽບໃສ່ອາທິດຜ່ານມາ, ຕະຫຼອດອາທິດນີ້ ມີປະລິມານຊື້-ຂາຍຮຸ້ນທັງໝົດ 175.100 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 833,50 ລ້ານກີບ ເພີ່ມຂຶ້ນ 129,76% ທຽບໃສ່ອາທິດຜ່ານມາ. ໂດຍອາທິດນີ້ ມີຜູ້ລົງທຶນຕ່າງປະເທດຊື້-ຂາຍສະເລ່ຍ ກວມເອົາ 63,83% ຂອງມູນຄ່າການຊື້-ຂາຍທັງໝົດ.

| ຊື່ | ດັດຊະນີອາທິດທີ 01-05/01/2017 | ດັດຊະນີອາທິດທີ 08-12/01/2017 | %(ເພີ່ມຂຶ້ນ+)/(ຫຼຸດລົງ-) | ໝາຍເຫດ |
|---|---|---|---|---|
| ດັດຊະນີຕະຫຼາດຫຼັກຊັບລາວ | 990.63 | 974.98 | -1.58 | |

ສະພາບການຊື້-ຂາຍຮຸ້ນຂອງຕະຫຼາດຫຼັກຊັບລາວ(LSX) (ຫົວໜ່ວຍມູນຄ່າ 1.000ກີບ)

| | ອາທິດກ່ອນ | | | ອາທິດນີ້ | | | %ປ່ຽນແປງ | | |
|---|---|---|---|---|---|---|---|---|---|
| ລາຍຊື່ | ຈຳນວນ (ຮຸ້ນ) | ມູນຄ່າການຊື້-ຂາຍ (ກີບ) | ລາຄາສະເລ່ຍ (ກີບ) | ຈຳນວນ (ຮຸ້ນ) | ມູນຄ່າການຊື້-ຂາຍ (ກີບ) | ລາຄາສະເລ່ຍ (ກີບ) | ຈຳນວນ (ຮຸ້ນ) | ມູນຄ່າການຊື້-ຂາຍ (ກີບ) | ລາຄາສະເລ່ຍ (ກີບ) |
| ທະນາຄານການຄ້າຕ່າງປະເທດລາວມະຫາຊົນ | 38.900 | 223.400.000 | 5.743 | **27.500** | **161.495.000** | **5.873** | -29.31 | -27.71 | 130 |
| ບໍລິສັດຜະລິດໄຟຟ້າລາວມະຫາຊົນ | 26.800 | 126.840.000 | 4.733 | **144.600** | **666.520.000** | **4.609** | 439.55 | 425.48 | -123 |
| ບໍລິສັດລາວເວີນມະຫາຊົນ | - | - | 3.500 | - | - | **3.500** | - | - | - |
| ບໍລິສັດປີໂຕລ້ຽມເທລດດິ້ງລາວມະຫາຊົນ | 100 | 240.000 | 2.100 | **1.000** | **2.090.000** | **2.100** | 900.00 | 770.83 | - |
| ບໍລິສັດສຸວັນນີໂຮມເຊັນເຕີມະຫາຊົນ | - | - | 2.950 | - | - | **2.950** | - | - | - |
| ບໍລິສັດພູສີກໍ່ສ້າງມະຫາຊົນ | 7.500 | 12.290.000 | 1.639 | **2.000** | **3.400.000** | **1.700** | -73.33 | -72.34 | 61 |
| ທັງໝົດ | 73.300 | 362.770.000 | | **175.100** | **833.505.000** | | 138.88 | 129.76 | |

3. ວຽກງານອື່ນໆທີ່ພົ້ນເດັ່ນ.

- ສຳເລັດການເຂົ້າຮ່ວມກອງປະຊຸມ, ຈັດກອງປະຊຸມ, ສຳມະນາ ແລະ ພິທີຕ່າງໆ: ❶ ກອງປະຊຸມກັບສາຂາພາກ ທຫລ ກ່ຽວກັບວຽກງານ ຄຸ້ມຄອງ-ກວດກາ ປະຈຳປີ 2017 ທີ່ (ທຫລ), ❷ ກອງປະຊຸມປຶກສາຫາລືກ່ຽວກັບການປັບປຸງຮ່າງກົດໝາຍວ່າດ້ວຍລະບົບຊຳລະແຫ່ງຊາດ ທີ່ (ທຫລ), ❸ ກອງປະຊຸມຄະນະສະເພາະກິດ ຂອງລັດຖະບານໃນການແກ້ໄຂບັນຫາບໍລິສັດ ພີເອັສ ສົ່ງເສີມກະສິກຳ ແລະ ອຸດສາຫະກຳ ຄົບວົງຈອນ ຂາອອກ-ຂາເຂົ້າ (ທຫລ), ❹ ກອງປະຊຸມທະວິພາຄີລະຫວ່າງທະນາຄານກາງແຫ່ງຊາດກຳປູເຈຍ ແລະ ທະນາຄານແຫ່ງ ສປປ ລາວ ທີ່ ປະເທດກຳປູເຈຍ, ❺ ກອງປະຊຸມສະຫຼຸບການຈັດຕັ້ງປະຕິບັດວຽກງານປະຈຳປີ ຂອງຂະແໜງການພາຍໃນ ແລະ ວຽກງານ 3 ສ້າງທົ່ວປະເທດ ປະຈຳປີ 2017 ແລະ ວາງທິດທາງແຜນການ ປີ 2018 (ຫໍປະຊຸມແຫ່ງຊາດ), ❻ ກອງປະຊຸມສ່ອງແສງສາຍພັກ-ລັດ ປະຈຳເດືອນ ມັງກອນ 2018 ທີ່ (ທຫລ), ❼ ຝຶກອົບຮົມໃນຫົວຂໍ້: "ບໍລິຫານຄວາມຮູ້ ເພື່ອເພີ່ມປະສິດ

ຄຸົພາບຂອງອົງກອນ" ທີ່ (ສະຖາບັນພັດທະນາຊັບພະຍາກອນມະນຸດ ລາວ-ຍີ່ປຸ່ນ) ແລະ ❽ ກອງປະຊຸມປຶກສາຫາລື ກ່ຽວກັບການດຳເນີນທຸລະກຳ FX SWAP ແລະ ການກຳນົດອັດຕາດອກເບ້ຍດຳເນີນທຸລະກຳປ່ອຍກູ້ຂອງ ທຫລ ໂດຍມີເງິນຕາຕ່າງປະເທດເປັນຫຼັກຊັບຄ້ຳປະກັນ ທີ່ (ທຫລ).

**III.ແຜນວຽກຈຸດສຸມອາທິດຕໍ່ໄປ:**

- ສືບຕໍ່ດຳເນີນນະໂຍບາຍເງິນຕາແລະອັດຕາແລກປ່ຽນທີ່ໄດ້ກຳນົດໄວ້ໃນແຜນວຽກປະຈຳປີ ເພື່ອຮັກສາສະຖຽນລະພາບເງິນຕາແຫ່ງຊາດໃຫ້ມີຄວາມໝັ້ນທ່ຽງ; ສືບຕໍ່ຕິດຕາມການຈັດຕັ້ງປະຕິບັດນະໂຍບາຍອັດຕາດອກເບັ້ຍຂອງ ທຫລ ແລະ ການສ້າງໂປຼແກຼມຕິດຕາມນະໂຍບາຍດັ່ງກ່າວຢ່າງໃກ້ຊິດ; ສືບຕໍ່ຕິດຕາມ, ກວດກາ ແລະ ສັງລວມການຮັກສາລະດັບຖານະເງິນຕາຕ່າງປະເທດຂອງທະນາຄານທຸລະກິດທົ່ວລະບົບ;
- ສືບຕໍ່ຄົ້ນຄວ້າກ່ຽວກັບຂໍ້ມູນກ່ຽວກັບດຳລັດວ່າດ້ວຍທຸລະກິດເຊົ່າສິນເຊື່ອ ເຂົ້າໃນຕາຕະລາງຮ່າງຄຳແນະນຳໃນການວາງມາດຕະຖານຕໍ່ກັບສະຖາບັນການເງິນທີ່ລະເມີດລະບຽບກົດໝາຍ;
- **ກະກຽມຈັດກອງປະຊຸມ:** ❶ ກອງປະຊຸມຄົ້ນຄວ້າປັບປຸງກົດໝາຍວ່າດ້ວຍ ທະນາຄານແຫ່ງ ສປປ ລາວ, ❷ ກອງປະຊຸມກ່ຽວກັບການຊື້-ຂາຍເງິນຕາຕ່າງປະເທດ ຂອງບັນດາທະນາຄານທຸລະກິດ, ❸ ກອງປະຊຸມປຶກສາຫາລື ກ່ຽວກັບຄຳເຫັນຕໍ່ກັບບົດປະເມີນເສດຖະກິດມະຫາພາກຂອງ IMF ໄຕມາດ 4 ປີ 2017 ແລະ ❹ ກອງປະຊຸມຄະນະຮັບຜິດຊອບກະກຽມສະເຫຼີມສະຫຼອງວັນສ້າງຕັ້ງທະນາຄານຄົບຮອບ 50 ປີ;
- **ເຂົ້າຮ່ວມກອງປະຊຸມ:** ❶ ກອງປະຊຸມສຳມະນາວິທະຍາສາດ ການຍົກສູງຄຸນນະພາບການເປັນເສນາທິການຮັບໃຊ້ການນຳ ແລະ ວຽກກໍ່ສ້າງຮາກຖານການເມືອງ, ❷ ກອງປະຊຸມໜ່ວຍງານວຽກງານອາຊຽນ+3 ທີ່ ປະເທດສິງກະໂປ, ❸ ກອງປະຊຸມທົບທວນວຽກງານຄວາມກ້າວໜ້າຂອງແມ່ຍິງ ແລະ ແມ່-ເດັກ ໃນຂະແໜງກະສິກຳ ແລະ ປ່າໄມ້ ປີ 2017 ແລະ ທິດທາງແຜນການປີ 2018 ທີ່ ແຂວງວຽງຈັນ ແລະ ❹ ກອງປະຊຸມວຽກງານຫ້ອງວ່າການທົ່ວປະເທດ ຄັ້ງທີ VIII ພາຍໃຕ້ຫົວຂໍ້: "ຍົກສູງຄຸນນະພາບການເປັນເສນາທິການ ແລະ ການປະສານງານທີ່ດີຂອງຫ້ອງການ" ທີ່ ຫ້ອງປະຊຸມຄະນະເລຂາທິການສະພາແຫ່ງຊາດ.

ຫົວໜ້າຫ້ອງການ

ທະນາຄານແຫ່ງ ສປປ ລາວ

ຫ້ອງການ

ເພັດສະຖາພອນ ແກ້ວວົງວິຈິດ